**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 07 /ສປສສ

ນະຄອນຫຼວງວຽງຈັນ, ວັນທີ 29 ກັນຍາ 2016

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ທຸກຂັ້ນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ຊັບທີ່ບໍ່ໄດ້ພົວພັນກັບຄະດີ.

**ອີງຕາມ** ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມະຕິຕົກລົງ ສະບັບເລກທີ 37/ ຄປຈ, ລົງວັນທີ 6 ພຶດສະພາ 2011 ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນສູງສຸດ;

**ອີງຕາມ** ມະຕິຕົກລົງຂອງກອງປະຊຸມສະພາຜູ້ພິພາກສາ ຄັ້ງວັນທີ 6 ກັນຍາ 2016.

ໃນໄລຍະຜ່ານມາ ເຫັນວ່າ ການເນີນຄະດີອາຍາຂອງສານ ກ່ຽວກັບຊັບສິ່ງຂອງ ຫຼື ວັດຖຸຕິດຕົວຂອງຜູ້ຖືກຫາ ທີ່ເຈົ້າໜ້າທີ່ໄດ້ຍຶດ ຫຼື ອາຍັດໄວ້, ຜ່ານການດຳເນີນຄະດີຕົວຈິງແລ້ວ ເຫັນວ່າຊັບດັ່ງກ່າວບໍ່ມີສ່ວນພົວພັນກັບການກະທຳຜິດ, ແຕ່ສານບາງແຫ່ງຊ້ຳພັດພິຈາລະນາຕັດສິນໃຫ້ນຳເອົາຊັບດັ່ງກ່າວໄປຈ່າຍຄ່າປັບໃໝ ຫຼື ທົດແທນຄ່າສິ້ນເປືອງອື່ນໆນັ້ນ ເປັນການບໍ່ຖືກຕ້ອງ. ສະນັ້ນ ເພື່ອໃຫ້ມີຄວາມເປັນເອກະພາບກັນ, ພ້ອມທັງເປັນບ່ອນອີງໃຫ້ແກ່ສານປະຊາຊົນ ແລະ ສານທະຫານ, ທັງມີຄວາມຖືກຕ້ອງ ແລະ ສອດຄ່ອງ ຕາມມາດຕາ 34 ຂອງກົດໝາຍອາຍາສະບັບປັບປຸງ ປີ 2005 ແລະ ມາດຕາ 33 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງ ປີ 2006.

**ປະທານສານປະຊາຊົນສູງສຸດ ອອກຄຳແນະນຳ ດັ່ງນີ້:**

1. ຊັບສິ່ງຂອງ ຫຼື ວັດຖຸຕິດຕົວ ຂອງຜູ້ຖືກຫາ ທີ່ເຈົ້າໜ້າທີ່ ຍຶດ ຫຼື ອາຍັດໄວ້ນັ້ນ ຖ້າຫາກບໍ່ກ່ຽວພັນກັບການກະທຳ ,ຜິດ ສານຕ້ອງໄດ້ຕັດສິນສິ່ງຊັບດັ່ງກ່າວຄືນໃຫ້ແກ່ເຈົ້າຂອງ, ຫ້າມບໍ່ໃຫ້ຕັດສິນເອົາຊັບສິ່ງຂອງດັ່ງກ່າວນັ້ນ ໄປຈ່າຍຄ່າປັບໃໝ ຫຼື ທົດແທນຄ່າສິ້ນເປືອງອື່ນໆ;

2. ຄວາມຮັບຜິດຊອບຕໍ່ຄໍາທໍານຽມສານທາງອາຍາ ແມ່ນໃຫ້ປະຕິບັດຕາມມາດຕາ 5 ແລະ 33 ຂອງກົດໝາຍວ່າ ດ້ວຍຄ່າທໍານຽມສານ ສະບັບປັບປຸງ ປີ 2006.

ເມື່ອໄດ້ຮັບຄໍາແນະນໍາສະບັບນີ້ແລ້ວ ຈຶ່ງນໍາໄປເຜີຍແຜ່ໃຫ້ພະນັກງານທີ່ກ່ຽວຂ້ອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ຢ່າງເຂັ້ມງວດ.

ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສານປະຊາຊົນສູງສຸດ**

ຄໍາພັນ ສິດທິດໍາພາ

ບ່ອນສົ່ງ:

- ຄະນະປະຈໍາສະພາແຫ່ງຊາດ 1 ສະບັບ (ເພື່ອລາຍງານ)
- ຫ້ອງການໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອຊາບ);
- ກະຊວງຍຸຕິທໍາ 1 ສະບັບ(ເພື່ອຊາບ);
- ບັນດາສານປະຊາຊົນທ້ອງຖິ່ນ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ປະຕິບັດ);
- ຄະນະສານ, ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອປະຕິບັດ);
- ສໍາເນົາໄວ້ 2 ສະບັບ.